ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------

ແຂວງໄຊຍະບູລີ

ເລກທີ 010/ຈຂ.ຊຍ

ໄຊຍະບູລີ, ວັນທີ 10 ມີນາ 2015

**ຄຳສັ່ງແນະນຳ**

**ກ່ຽວກັບການປະຕິບັດນະໂຍບາຍ**

**ການເກີດລູກ ແລະ ປິ່ນປົວເດັກລຸ່ມ 05 ປີ ບໍ່ເສຍຄ່າ**

**ເຖິງ:** ທ່ານເຈົ້າເມືອງ ເມືອງຫົງສາ, ເມືອງເງິນ, ເມືອງປາກລາຍ, ເມືອງບໍ່ແຕນ ແລະ ເມືອງໄຊສະຖານ.

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ແຫ່ງ ສ ປ ປ ລ ພາກທີ II, ໝວດ ທີ III, ມາດຕາທີ 14 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະຄອນ.
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບ ເລກທີ 273/ລບ ລົງວັນທີ 19 ສິງຫາ 2014 ວ່າດ້ວຍການອຸດໜູນການອອກລູກ ແລະ ປິ່ນປົວເດັກອາຍຸ ລຸ່ມ 05 ປີ ບໍ່ເສຍຄ່າ.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າການກະຊວງສາທາລະນະສຸກ ສະບັບເລກທີ 167/ສທ , ລົງວັນທີ 17 ມັງກອນ 2013 ວ່າດ້ວຍການຈັດຕັ້ງປະຕິບັດນະໂຍບາຍການເກີດລູກ ແລະ ປິ່ນປົວ ເດັກ ອາຍຸລຸ່ມ 05 ປີ ບໍ່ເສຍຄ່າ.
- ອີງຕາມ ໃບສະເໜີຂອງພະແນກສາທາລະນະສຸກແຂວງ ສະບັບເລກທີ 319/ພສຂ.ຊຍ, ລົງວັນທີ 12 ກຸມພາ 2015.

**ເຈົ້າແຂວງໄຊຍະບູລີ ອອກຄຳສັ່ງ ແນະນຳ ດັ່ງນີ້:**

1. ການຈັດຕັ້ງປະຕິບັດ ນະໂຍບາຍການເກີດລູກ ແລະ ປິ່ນປົວ ເດັກລຸ່ມ 05 ປີ ບໍ່ ເສຍຄ່າ ຢູ່ ເມືອງ ຫົງສາ, ເມືອງ ເງິນ, ເມືອງ ປາກລາຍ, ເມືອງ ບໍ່ແຕນ ແລະ ເມືອງ ໄຊສະຖານ ໃຫ້ເລີ່ມຈັດຕັ້ງປະຕິບັດແຕ່ວັນທີ 1 ມີນາ 2015 ເປັນຕົ້ນໄປ, ໂດຍຈັດຕັ້ງປະຕິບັດທັງສອງ ເປົ້າໝາຍຄື: ແມ່, ເດັກ ອາຍຸ ລຸ່ມ 05 ປີ ແລະ ຈັດຕັ້ງປະຕິບັດຢູ່ໃນສະຖານທີ່ບໍລິການສາ ທາລະນະສຸກແຕ່ລະຂັ້ນ.
2. ໃຫ້ຂັ້ນເມືອງຮີບຮ້ອນຈັດຕັ້ງເຜີຍແຜ່ການປະຕິບັດນະໂຍບາຍການເກີດລູກ ແລະ ປິ່ນປົວ ເດັກອາຍຸລຸ່ມ 05 ປີ ບໍ່ເສຍຄ່າ ໃຫ້ພະນັກງານແພດໝໍ, ອົງການປົກຄອງ ແລະ ພໍ່ແມ່ປະຊາ

ຊຶ່ນໃຫ້ເລີກເຊິ່ງກວ້າງຂວາງ, ໂດຍອີງໃສ່ປຶ້ມຄູ່ມື ສະບັບເດືອນມັງກອນ 2013 ແຕ່ຍົກເວັ້ນ ການຈ່າຍເງິນອຸດໜູນໃຫ້ ອ ສ ບ ບ້ານ.

3. ການປະຕິບັດນະໂຍບາຍນີ້ບໍ່ກວມ (ຍົກເວັ້ນ) ສະມາຊິກທີ່ເຂົ້າຄັງປະກັນສຸຂະພາບໃດໜຶ່ງ.

4. ໃຫ້ແຕ່ລະຂັ້ນ ແຕ່ງຕັ້ງຄະນະຮັບຜິດຊອບການຈັດຕັ້ງປະຕິບັດນະໂຍບາຍການເກີດລູກ ແລະ ປິ່ນປົວເດັກ ອາຍຸລຸ່ມ 05 ປີ ບໍ່ເສຍຄ່າ , ພ້ອມທັງເກັບກຳກຸ່ມເປົ້າໝາຍໃຫ້ລະອຽດ.

5. ສຳລັບເມືອງປາກລາຍ, ເມືອງທົ່ງສາ ທີ່ປະຕິບັດນະໂຍບາຍການເກີດລູກ ແລະ ປິ່ນປົວເດັກອາຍຸ ລຸ່ມ 05 ປີ ບໍ່ເສຍຄ່າ ຂອງສາມເມືອງ 06 ບ້ານທົດລອງ 3 ສ້າງ ສະບັບເລກທີ 2575/ພສຂ.ຊຍ, ລົງວັນທີ 23 ສິງຫາ 2013 ແມ່ນໃຫ້ນຳໃຊ້ຕາມຄຳສັ່ງແນະນຳສະບັບນີ້ນັບແຕ່ມື້ປະກາດໃຊ້ຢ່າງເປັນທາງການ.

6. ຄຳສັ່ງແນະນຳສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ພົງສະຫວັນ ສິດທະວົງ

- ບ່ອນສົ່ງ:

1. ພາກສ່ວນກ່ຽວຂ້ອງ ບ່ອນລະ 01 ສະບັບ.
2. ສຳເນົາ 01 ສະບັບ.